# ນິທານພັກສມອງແບບພື້ນບ້ານລາວ Lao Folklore

ບັນທຶກຄວາມຊົງຈຳ ແລະປັບປຸງໃຫ້ທັນສມັຍ ໂດຍ: ທະນາຍອິນໂຕຈຳພັນ"

As remembered and updated by Into Bo Champon, Esq.

## ຊຽງໝ້ຽງ : ນິທານຕົ້ນອ້ອຍ

ໃນເວລາ ທີ່ຊຽງໝ້ຽງ ນັ່ງຖ້າຄຣູບາ ເຊົາເທສນາ ລາວພັດ ເຫລືອບໄປເຫັນ ອ້ອຍຕັດເປັນຕ່ອນໆ ພ້ອມທັງມີຂໍ້ ແລະ ກໍບໍ່ມີຂໍ້ຊຽງໝ້ຽງ ພັດຢາກຈະກິນອ້ອຍ ທີ່ບໍ່ມີຂໍ້ ແຕ່ລາວເຫັນເດັກນ້ອຍຊຸມນັ້ນທີ່ແກ່ກວ່າ ແລະໃຫຍ່ກວ່າລາວ ຖ້າກິນຕ່ອນດຽວກັນ.

ພາຍຫລັງ ທີ່ຄຣູບາ ເຊົາເທສນາ ທາງຝ່າຍຊຽງໝ້ຽງ ກໍໄດ້ແລ່ນ ໄປເອົາອ້ອຍ ທີ່ມີຂໍ້ ທາງຝ່າຍເດັກ ແລະຊຽງອື່ນ ທີ່ໃຫຍ່ກວ່າ ຈຶ່ງຖາມຊຽງໝ້ຽງ ອອກໄປວ່າ ເປັນຫຍັງຊຽງຈຶ່ງກິນຂໍ້ອ້ອຍ ຊຽງກໍຕອບອອກໄປວ່າ: "ມົນຄຣູບາສູດ ເຂົ້າໄປຄ້າງຢູ່ໃນຂໍ້ນີ້ໝົດ ຂ້ອຍຈຶ່ງຈະກິນຂໍ້ ເພື່ອໃຫ້ເຂ້ອຍມີຄວາມສລາດຂຶ້ນ"

ຝ່າຍເດັກນ້ອຍ ຜູ້ໃຫຍ່ ທີ່ສລາດແດ່ ຈຶ່ງຖາມ ອີກວ່າ :

"ຖ້າມຶງເວົ້າເປັນຄວາມຈິງ ເປັນຫຍັງຄຣູບາ ຈຶ່ງບໍ່ກິນຂໍ້?"

-ຊຽງໝ້ຽງ : "ເພາະວ່າ ຄຣູບາເພິ່ນມີມົນແລ້ວ ບໍ່ຕ້ອງການເພີ້ມອີກ"

ເດັກນ້ອຍ ແລະຊຽງໃຫຍ່ອື່ນໆ ຈຶ່ງຊຸກຊຽງໝ້ຽງໜີ ແລະຍາດກັນກິນ ຂໍ້ອ້ອຍ...

ຜົນທີ່ສຸດ ຝ່າຍຊຽງໝ້ຽງ ກໍໄດ້ກິນອ້ອຍ ບໍ່ມີຂໍ້ ຕາມທີ່ລາວມັກ...



## XIANG MIENG: THE SUGAR CANE STORY

A long ... long ... time ago, when the center of knowledge and everything else in Laos was at the temples ...

While the boy Xieng Mieng was waiting for the monks to finish praying, he noticed sugar canes that were cut into different sections, some with a lot of intermodes and the others with mostly nodes (without much intermodes). He wanted to eat the intermodes but observed that there were a lot of older and bigger boys that were also waiting for the same sugar cane sections - the intermodes.

As soon as the monks finished praying, Xieng Mieng ran in front of everyone for the nodes sections.

When older and bigger boys asked him why, Xieng Mieng replied: “Well, the blessing of all the monks went into the nodes. Why would I eat the intermodes when I can eat the nodes which would make me smarter?”

A smarter bigger boy asked: “Why didn’t the monks ate the nodes then…?

Xieng Mieng: “Because the monks already had the blessing and did not need anymore.”

The bigger boys then pushed Xieng Mieng away and fought over the nodes section…

Xieng Mieng got to eat the intermodes section that he really wanted!!!...